**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ 015 /ຈນວ
ວັນທີ 30 ສິງຫາ 2021

# ຄຳສັ່ງ
# ວ່າດ້ວຍການເພີ່ມທະວີ ການປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການແຜ່ລະບາດຂອງພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນ

**ເຖິງ:** - ຫົວໜ້າກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກການ, ອົງການທຽບເທົ່າພະແນກ ນະຄອນຫຼວງວຽງຈັນ;
- ເຈົ້າເມືອງ ແລະ ນາຍບ້ານ ທົ່ວນະຄອນຫຼວງວຽງຈັນ;
- ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ປະຊາຊົນລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ດຳລົງຊີວິດ ຢູ່ນະຄອນຫຼວງວຽງຈັນ.

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1036/ຫສນຍ, ລົງວັນທີ 19 ສິງຫາ 2021;
- ອີງໃສ່ ສະພາບການລະບາດພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນ ໃນເດືອນສິງຫາ 2021 ນີ້.

ສະພາບການຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນ ໃນໄລຍະໜຶ່ງຜ່ານມາ ແມ່ນສາມາດຄວບຄຸມເຮັດໃຫ້ບໍ່ມີຜູ້ຕິດເຊື້ອພາຍໃນຊຸມຊົນໄດ້ໃນຂັ້ນພື້ນຖານ, ແຕ່ເນື່ອງຈາກສະພາບການແຜ່ລະບາດຢູ່ຕ່າງປະເທດ ໂດຍສະເພາະປະເທດເພື່ອນບ້ານຂອງພວກເຮົາ ຍັງມີການລະບາດຮຸນແຮງ, ພ້ອມດຽວກັນນັ້ນ ແຮງງານລາວ ໄດ້ພາກັນເດີນທາງກັບເຂົ້າມານະຄອນຫຼວງວຽງຈັນ ຢ່າງຫຼວງຫຼາຍ, ເຊິ່ງຈຳນວນໜຶ່ງແມ່ນໄດ້ຕິດເຊື້ອກັບມາ ຈຶ່ງເຮັດໃຫ້ການຄວບຄຸມການແຜ່ເຊື້ອ ພົບຄວາມຫຍຸ້ງຍາກ, ເຊິ່ງກໍ່ໃຫ້ເກີດມີການລະບາດໃນຊຸມຊົນ ຢູ່ໃນຂອບເຂດຫຼາຍບ້ານອີກຄັ້ງ, ບວກກັບສະພາບສັງຄົມປັດຈຸບັນ ຍັງຖືເບົາໃນການປ້ອງກັນຕົນເອງ, ການຈຳກັດການອອກເຮືອນ ແລະ ຍັງມີການຊຸມແຊວເປັນວົງກວ້າງຢູ່ ເຮັດໃຫ້ເກີດການລະບາດເປັນຈຸ້ມຢູ່ບາງເຂດ ທີ່ຍັງບໍ່ສາມາດລະບຸແຫຼ່ງທີ່ມາຂອງການຕິດເຊື້ອໄດ້ຢ່າງຊັດເຈນ, ສະນັ້ນ ເພື່ອສະກັດກັ້ນ, ຄວບຄຸມ ແລະ ປ້ອງກັນເຊື້ອພະຍາດ ບໍ່ໃຫ້ມີການແຜ່ລະບາດໃນຊຸມຊົນເປັນວົງກວ້າງ.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຄຳສັ່ງ:

1. ສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ຕ້ານພະຍາດ COVID -19 ຢ່າງເຂັ້ມງວດ ໄປຈົນກວ່າຈະສາມາດຄວບຄຸມການແຜ່ລະບາດພະຍາດຢູ່ໃນຊຸມຊົນໄດ້;
2. **ໃຫ້ເພີ່ມທະວີ ຈັດຕັ້ງປະຕິບັດມາດຕະການ ຫ້າມ/ປິດ ທົ່ວໄປ ຢ່າງເຂັ້ມງວດ ດັ່ງນີ້:**
   - **2.1.** ຫ້າມບຸກຄົນທີ່ຢູ່ໃນເຂດ/ບ້ານແດງຂອງນະຄອນຫຼວງວຽງຈັນ ອອກໄປຕ່າງແຂວງ ແລະ ຫ້າມບຸກຄົນຈາກ ເຂດ/ບ້ານແດງຂອງຕ່າງແຂວງ ເດີນທາງເຂົ້າມານະຄອນຫຼວງວຽງຈັນ, ຍົກເວັ້ນ ຜູ້ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ຂັ້ນແຂວງ;
   - **2.2.** ຫ້າມຈັດງານລ້ຽງສັງສັນ ຫຼື ຊຸມແຊວທຸກຮູບແບບ ຢູ່ທຸກສະຖານທີ່, ຜູ້ທີ່ລະເມີດ ຈະຖືກນຳຕົວໄປຈຳກັດບໍລິເວນ ຢູ່ສູນ ຫຼື ໂຮງແຮມຈຳກັດບໍລິເວນ ຂອງນະຄອນຫຼວງວຽງຈັນ ຕາມລະບຽບການທາງການແພດ, ພ້ອມທັງຖືກປັບໄໝ ແລະ ຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນ ດ້ວຍຕົນເອງທັງໝົດ;

2.3. ຫ້າມຈັດກອງປະຊຸມ, ຝຶກອົບຮົມ ແລະ ກິດຈະກໍາຕ່າງໆເກີນ 20 ຄົນ ແລະ ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ;

2.4. ຫ້າມເປີດຮ້ານຄາຣາໂອເກະ, ສະຖານບັນເທີງ, ສະຖານທີ່ທ່ອງທ່ຽວ, ຕະຫຼາດກາງຄືນ, ສວນອາຫານ, ຮ້ານກິນ-ດື່ມ (ລວມທັງຮ້ານປະເພດປີ້ງຕ່າງໆ ທີ່ມີການບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ), ໂຮງສາຍຮູບເງົາ, ຮ້ານສະນຸກເກີ, ຮ້ານນວດ, ຮ້ານສະປາ, ຮ້ານເສີມຄວາມງາມ, ຮ້ານອິນເຕີເນັດຄາເຟ ແລະ ຮ້ານເກມທຸກປະເພດ;

2.5. ຫ້າມເປີດສູນກິລາໃນຮົ່ມ - ກາງແຈ້ງ ເປັນຕົ້ນແມ່ນ: ສູນອອກກໍາລັງກາຍ, ເດີ່ນດອກປີກໄກ່, ເດີ່ນບານເຕະ, ເດີ່ນເປຕັງ, ສະໜາມຕີມວຍ, ສະລອຍນໍ້າ, ສັງວຽນຕີໄກ່ ແລະ ກິລາປະເພດອື່ນໆ ທີ່ຮ່າງກາຍສໍາຜັດກັນ;

2.6. ຫ້າມພາຫະນະສັນຈອນ ໃນຂອບເຂດທົ່ວນະຄອນຫຼວງວຽງຈັນ ຕັ້ງແຕ່ເວລາ 22:00 ໂມງ - 05:00 ໂມງເຊົ້າ, ຍົກເວັ້ນ ລົດຂົນສົ່ງສິນຄ້າ, ສະບຽງອາຫານ, ອຸປະກອນການແພດ, ລົດຂົນສົ່ງຄົນເຈັບ, ລົດດັບເພີງ, ລົດກູ້ໄພ, ລົດຄະນະສະເພາະກິດ ແລະ ລົດຂອງເຈົ້າໜ້າທີ່ປະຕິບັດງານ;

2.7. ຫ້າມສວຍໂອກາດກັກຕຸນ ແລະ ຂຶ້ນລາຄາສິນຄ້າອຸປະໂພກ, ບໍລິໂພກ, ອຸປະກອນການແພດ ແລະ ສິນຄ້າອື່ນໆ ທີ່ຈໍາເປັນຕໍ່ຊີວິດປະຈໍາວັນ ຢ່າງເດັດຂາດ;

2.8. ຫ້າມໂຄສະນາເຜີຍແຜ່, ສົ່ງຕໍ່ຂໍ້ມູນຂ່າວສານ ທີ່ບໍ່ມີມູນຄວາມຈິງ ຜ່ານສື່ຕ່າງໆ ທີ່ເຮັດໃຫ້ເກີດຄວາມເຂົ້າໃຈຜິດ, ສ້າງຄວາມແຕກຕື່ນ ແລະ ສົ່ງຜົນກະທົບດ້ານລົບຕໍ່ສັງຄົມ;

2.9. ປິດດ່ານປະເພນີ ແລະ ດ່ານທ້ອງຖິ່ນ ໃນທົ່ວນະຄອນຫຼວງວຽງຈັນ; ປິດການຂົນສົ່ງໂດຍສານ ຜ່ານດ່ານສາກົນຂົວມິດຕະພາບ ລາວ-ໄທ 1, ຍົກເວັ້ນລົດຂົນສົ່ງສິນຄ້າ ແລະ ບຸກຄົນທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ;

2.10. ປິດການຮຽນ-ການສອນ ທຸກຊັ້ນ, ທຸກສາຍ ແລະ ການເສັງເຂົ້າຮຽນສາຍອາຊີວະສຶກສາ, ສ້າງຄູ ແລະ ການສຶກສາຊັ້ນສູງ ຢູ່ນະຄອນຫຼວງວຽງຈັນ.

**3. ໃຫ້ປະຕິບັດບາງມາດຕະການຜ່ອນຜັນ ດັ່ງນີ້:**

3.1. ອະນຸຍາດໃຫ້ເປີດຮ້ານຂາຍຍົກ-ຂາຍຍ່ອຍ, ສູນການຄ້າ, ຮ້ານຊຸບເປີມາເກັດ, ຮ້ານມິນິມາດ, ຕະຫຼາດສົດ, ແຕ່ບໍ່ໃຫ້ຈັດກິດຈະກໍາເຕົ້າໂຮມຄົນຫຼາຍ ແລະ ບໍລິການເຄື່ອງຫຼິ້ນທຸກປະເພດ, ຜູ້ໃຫ້ບໍລິການ ຕ້ອງໄດ້ຮັບວັກຊີນຄົບໂດສ. ພ້ອມກັນນັ້ນ ຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອພະຍາດ COVID-19 (ມາດຕະການທາງການແພດ) ຢ່າງເຂັ້ມງວດ ເຊັ່ນ: ມີການວັດແທກອຸນຫະພູມ, ຮັກສາໄລຍະຫ່າງ 01 ແມັດ, ໃສ່ຜ້າອັດປາກ - ດັງ, ລ້າງມືດ້ວຍນໍ້າສະອາດໃສ່ສະບູ ຫຼື ນໍ້າຢາຂ້າເຊື້ອ ແລະ ໃຫ້ປິດບໍລິການຊ້າສຸດບໍ່ໃຫ້ກາຍ 21:00 ໂມງ;

3.2. ອະນຸຍາດໃຫ້ເປີດຮ້ານອາຫານ, ຮ້ານກາເຟ ໂດຍໃຫ້ບໍລິການໃນຮູບແບບຊື້ເມືອເຮືອນເປັນຕົ້ນຕໍ, ຖ້າບໍລິການໃຫ້ນັ່ງກິນໃນຮ້ານ ຕ້ອງຮັກສາໄລຍະຫ່າງໃຫ້ໄດ້ 1 ແມັດ ຂຶ້ນໄປ ແລະ ຫ້າມບໍລິການເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ; ຜູ້ໃຫ້ບໍລິການ ຕ້ອງໄດ້ຮັບວັກຊີນຄົບໂດສ. ພ້ອມກັນນັ້ນ ໃຫ້ປະຕິບັດມາດຕະການທາງການແພດຢ່າງເຂັ້ມງວດ ແລະ ໃຫ້ປິດບໍລິການຊ້າສຸດບໍ່ໃຫ້ກາຍ 21:00 ໂມງ;

3.3. ອະນຸຍາດໃຫ້ເປີດຮ້ານຕັດຜົມ ແລະ ຮ້ານເສີມສວຍ ໃນຮູບແບບຕັດແຕ່ງຜົມເປັນຕົ້ນຕໍ, ສ່ວນການບໍລິການອື່ນ ທີ່ເປັນການສໍາຜັດໃກ້ຊິດ, ມີຄວາມສ່ຽງຕໍ່ການຕິດເຊື້ອ ແລະ ແຜ່ເຊື້ອພະຍາດ ແມ່ນຫ້າມບໍລິການ ແລະ ບໍ່ໃຫ້ມີຄວາມແອອັດຢູ່ໃນຮ້ານບໍລິການ, ຜູ້ໃຫ້ບໍລິການ ຕ້ອງໄດ້ຮັບວັກຊີນຄົບໂດສ ແລະ ໃຫ້ປະຕິບັດມາດຕະການທາງການແພດຢ່າງເຂັ້ມງວດ ແລະ ໃຫ້ປິດບໍລິການຊ້າສຸດບໍ່ໃຫ້ກາຍ 19:00 ໂມງ;

3.4. ອະນຸຍາດໃຫ້ນໍາໃຊ້ເຮືອໄປທໍາການຜະລິດ ແລະ ຫາປາຕາມລໍາແມ່ນໍ້າຂອງ ໃນໄລຍະແຕ່ 06:00-18:00 ໂມງ ໂດຍມີການບັນທຶກການ ເຂົ້າ-ອອກ ຂອງເຮືອແຕ່ລະລໍາ ຢ່າງລະອຽດ, ໃຫ້ອົງການປົກຄອງເມືອງ ສົມທົບກັບກໍາລັງ ປກຊ-ປກສ ແລະ ອົງການປົກຄອງບ້ານ ເພື່ອຄຸ້ມຄອງຢ່າງເຂັ້ມງວດ;

3.5. ອະນຸຍາດໃຫ້ເປີດໂຮງຈັກໂຮງງານ ເພື່ອດໍາເນີນກິດຈະການໄດ້ ໂດຍພະນັກງານ, ກໍາມະກອນ ຕ້ອງໄດ້ຮັບວັກຊີນຄົບໂດສ ແລະ ບໍ່ມາຈາກພື້ນທີ່ ທີ່ມີການຕິດເຊື້ອ (ເຂດ/ບ້ານແດງ), ພ້ອມທັງ ຕ້ອງປະຕິບັດມາດຕະການຕ່າງໆ ທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ; ສໍາລັບ ໂຮງງານໃດທີ່ມີເງື່ອນໄຂ ກໍ່ໃຫ້ຈັດສັນທີ່ພັກອາໄສກັບທີ່ໃຫ້ແຮງງານຂອງຕົນ ເພື່ອຫຼຸດຜ່ອນຄວາມສ່ຽງໃນການຕິດ ແລະ ແຜ່ເຊື້ອ;

3.6. ອະນຸຍາດໃຫ້ສຳນັກງານ, ອົງການທັງພາກລັດ ແລະ ເອກະຊົນ ຢູ່ນະຄອນຫຼວງວຽງຈັນ ຄົ້ນຄວ້າການປະຈຳການ ໃຫ້ພະນັກງານຂອງຕົນ ບົນພື້ນຖານຮັບປະກັນໃນການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອພະຍາດ COVID-19 ເປັນຕົ້ນ: ຜູ້ທີ່ໄດ້ຮັບວັກຊີນຄົບໂດສ, ວັດແທກອຸນຫະພູມ, ຮັກສາໄລຍະຫ່າງ 01 ແມັດ, ໃສ່ຜ້າອັດປາກ - ດັງ, ລ້າງມືດ້ວຍນ້ຳສະອາດໃສ່ສະບູ ຫຼື ນ້ຳຢາຂ້າເຊື້ອ.

**4. ໃຫ້ປະຕິບັດມາດຕະການສະເພາະສຳລັບບ້ານທີ່ມີການແຜ່ເຊື້ອໃນຊຸມຊົນ (ເຂດ/ບ້ານແດງ) ຢ່າງເຂັ້ມງວດ.**

ຄຽງຄູ່ກັບການປະຕິບັດມາດຕະການ ຫ້າມ/ປິດ ທົ່ວໄປ ທີ່ໄດ້ລະບຸໄວ້ໃນຂໍ້ 2 ຂອງຄຳສັ່ງສະບັບນີ້ແລ້ວ ແມ່ນໃຫ້ປະຕິບັດມາດຕະການສະເພາະ ໃນການຄວບຄຸມບ້ານທີ່ມີການແຜ່ເຊື້ອໃນຊຸມຊົນ (ເຂດ/ບ້ານແດງ) ເພີ່ມເຕີມ ດັ່ງນີ້:

4.1. ປິດການສັນຈອນ ແລະ ຫ້າມບຸກຄົນ ເຂົ້າ-ອອກ ເຂດ/ບ້ານແດງ ພາຍໃນ 14 ວັນ ນັບແຕ່ມື້ກວດພົບຜູ້ຕິດເຊື້ອພະຍາດ ຢ່າງເດັດຂາດ, ຜູ້ທີ່ລະເມີດ ຈະຖືກນຳຕົວໄປຈຳກັດບໍລິເວນ ຢູ່ສູນ ຫຼື ໂຮງແຮມຈຳກັດບໍລິເວນຂອງນະຄອນຫຼວງວຽງຈັນ ຕາມລະບຽບການທາງການແພດ ແລະ ໃຫ້ຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນ ດ້ວຍຕົນເອງທັງໝົດ, ຍົກເວັ້ນເຈົ້າໜ້າທີ່ ແລະ ຜູ້ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດເມືອງ - ບ້ານ;

4.2. ຫ້າມຄົນ ເຂົ້າ-ອອກ ໂດຍໃຫ້ຈັດຕັ້ງການປ້ອງກັນເວນຍາມ ແລະ ຕັ້ງຈຸດກວດກາ ເພື່ອຄວບຄຸມ ເຂດ/ບ້ານແດງ ຕະຫຼອດ 24 ຊົ່ວໂມງ ພາຍໃນ 14 ວັນ ຢ່າງເຂັ້ມງວດ. ພ້ອມກັນນັ້ນ ກໍ່ໃຫ້ອາສາສະໝັກ ຊ່ວຍເຫຼືອ ເພື່ອບໍລິການຈັດຊື້ສະບຽງອາຫານ ແລະ ເຄື່ອງໃຊ້ທີ່ຈຳເປັນໃຫ້ຄອບຄົວທີ່ມີຄວາມຫຍຸ້ງຍາກ ຢູ່ເຂດ/ບ້ານແດງ;

4.3. ຫ້າມຈັດກອງປະຊຸມ, ຝຶກອົບຮົມ, ງານບຸນປະເພນີ ແລະ ກິດຈະກຳອື່ນໆ ຢ່າງເດັດຂາດ;

4.4. ປິດຮ້ານຂາຍຍົກ-ຂາຍຍ່ອຍ, ສູນການຄ້າ, ຮ້ານຊຸບເປີມາເກັດ, ຮ້ານມິນິມາດ, ຕະຫຼາດສົດ, ຮ້ານອາຫານ, ຮ້ານກາເຟ, ຮ້ານຕັດຜົມ ແລະ ຮ້ານເສີມສວຍ ຢູ່ເຂດ/ບ້ານແດງ, ພ້ອມກັນນັ້ນ ກໍ່ໃຫ້ປະຕິບັດມາດຕະການ ຫ້າມ/ປິດ ທົ່ວໄປ ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2.4 ແລະ 2.5 ຂອງຄຳສັ່ງສະບັບນີ້;

4.5. ຫ້າມໄປເຄື່ອນໄຫວອອກກຳລັງກາຍ ຕາມສວນສາທາລະນະຕ່າງໆ ລວມທັງຫຼິ້ນກິລາກ໊ອຟ ໃນເຂດ/ບ້ານແດງ;

4.6. ປິດໂຮງຈັກ-ໂຮງງານ ໃນເຂດ/ບ້ານແດງ, ຍົກເວັ້ນໂຮງງານທີ່ມີທີ່ພັກ, ມີລັດຮັບສິ່ງກຳມະກອນສະເພາະ ແລະ ຮັບປະກັນໃນການປະຕິບັດມາດຕະການທາງການແພດ ຢ່າງເຂັ້ມງວດ;

4.7. ນຳເອົາຜູ້ຕິດເຊື້ອໄປປິ່ນປົວ ແລະ ນຳເອົາຜູ້ສຳຜັດໃກ້ຊິດມາກວດຫາເຊື້ອ ແລະ ຈຳກັດບໍລິເວນໂດຍໄວ; ອະນາໄມ ພົ່ນຢາຂ້າເຊື້ອ ຕາມສະຖານທີ່ເຮັດວຽກ ແລະ ທີ່ພັກອາໄສຂອງຜູ້ຕິດເຊື້ອ; ດຳເນີນການໃຫ້ວັກຊີນເຄື່ອນທີ່ ແກ່ບຸກຄົນ ທີ່ຍັງບໍ່ທັນໄດ້ຮັບວັກຊີນ;

4.8. ໂຄສະນາປະຊາສຳພັນ, ໃຫ້ຂໍ້ມູນຂ່າວສານ ແລະ ຄຳແນະນຳ ກ່ຽວກັບການປະຕິບັດມາດຕະການຕ່າງໆ ທີ່ຄະນະສະເພາະກິດວາງອອກ ຢ່າງທົ່ວເຖິງ;

4.9. ສຳນັກງານ, ຫ້ອງການ ທີ່ຕັ້ງຢູ່ໃນພື້ນທີ່ກຳນົດເຂດແດງ ທີ່ມີຄວາມຈຳເປັນຕ້ອງປະຈຳການ ໃຫ້ປະຕິບັດມາດຕະການທາງການແພດ ຢ່າງເຂັ້ມງວດ;

4.10. ອະນຸຍາດໃຫ້ເປີດຫ້ອງການບ້ານ, ປກສ ກຸ່ມບ້ານ, ສຸກສາລາ ແລະ ຮ້ານຂາຍຢາ.

**5. ໃຫ້ຊາວນະຄອນຫຼວງວຽງຈັນ ຍົກສູງສະຕິຄວາມເປັນເຈົ້າການຕົນເອງ ໃນການຄຸ້ມຄອງ ແລະ ແນະນຳສະມາຊິກຄອບຄົວປະຕິບັດມາດຕະການປ້ອງກັນ ແລະ ຕິດຕາມສຸຂະພາບຕົນເອງ ດັ່ງນີ້:**

**5.1. ມາດຕະການປ້ອງກັນຕົນເອງ:**

- ຫຼຸດຜ່ອນການພົບປະທາງສັງຄົມ ຫຼື ຫຼີກລ່ຽງໄປບ່ອນທີ່ມີຄົນຈຳນວນຫຼາຍ, ໃນກໍລະນີຈຳເປັນ ຕ້ອງອອກເຮືອນແມ່ນໃຫ້ປ້ອງກັນຕົນເອງດ້ວຍການໃສ່ຜ້າອັດ ປາກ-ດັງ ທຸກຄັ້ງ, ຮັກສາໄລຍະຫ່າງກັບຄົນອື່ນໃຫ້ໄດ້ 01 ແມັດຂຶ້ນໄປ ແລະ ລ້າງມືດ້ວຍນ້ຳສະອາດໃສ່ສະບູ ຫຼື ນ້ຳຢາຂ້າເຊື້ອ ຕະຫຼອດເວລາ;
- ບຸກຄົນໃນເກນອາຍຸ 18 ປີຂຶ້ນໄປ ໃຫ້ຮັບວັກຊີນຢູ່ຕາມສະຖານທີ່ ບໍລິການໃຫ້ວັກຊີນ ທີ່ຄະນະສະເພາະກິດໄດ້ກຳນົດໄວ້;
- ຍົກສູງສະຕິເປັນເຈົ້າການຕົນເອງໃນການປະຕິບັດມາດຕະການຕ່າງໆ, ທັງເປັນເຈົ້າການຕິດຕາມ ແລະ ລາຍງານກໍລະນີພົບເຫັນ ການລະເມີດລະບຽບການ ຫຼື ລະເມີດມາດຕະການຕ່າງໆ ໃຫ້ແກ່ຄະນະສະເພາະກິດລົງກວດກາ ແລະ ແກ້ໄຂບັນຫາຢ່າງທັນການ;
- ຕິດຕັ້ງ ແອບພລິເຄຊັນ ລາວ ຂີ້ງ (LaoKYC) ເພື່ອລົງທະບຽນ ເຂົ້າໃຊ້ບໍລິການ ຕາມສະຖານທີ່ຕ່າງໆ. ʃ

**5.2. ມາດຕະການຕິດຕາມສຸຂະພາບຕົນເອງ:**

ບຸກຄົນທີ່ຢູ່ໃນກຸ່ມສ່ຽງ ຫຼື ຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອ ແລະ ຜູ້ທີ່ມີອາການສົງໄສ ໃຫ້ປະຕິບັດຕົນເອງ ດັ່ງນີ້:

❶ ໃຫ້ແຍກປ່ຽວ ແລະ ວັດແທກອຸນຫະພູມຕົນເອງ ຢ່າງເປັນປົກກະຕິ (ເຊົ້າ-ແລງ); ພ້ອມທັງໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດໃສ່ສະບູ ຫຼື ນ້ຳຢາຂ້າເຊື້ອ ແລະ ຮັກສາໄລຍະຫ່າງຕົນເອງຈາກຄົນອື່ນ ຕະຫຼອດເວລາ;

❷ ໃຫ້ໄປກວດຫາເຊື້ອພະຍາດ COVID-19 ຕາມສູນທີ່ຄະນະສະເພາະກິດກຳນົດ ໂດຍໄວ;

❸ ໃຫ້ຈຳກັດບໍລິເວນຕົນເອງໃຫ້ຄົບ 14 ວັນ (ໃນກໍລະນີຜົນກວດເປັນບວກ ເຈົ້າໜ້າທີ່ຈະຕິດຕໍ່ກັບທັນທີ).

6. ສືບຕໍ່ຈັດຕັ້ງການໃຫ້ວັກຊີນແກ່ກຸ່ມເປົ້າໝາຍຕ່າງໆ ໃຫ້ສຳເລັດຕາມແຜນການ ແລະ ຄາດໝາຍທີ່ວາງໄວ້; ຊອກຫາຜູ້ຕິດເຊື້ອມາປິ່ນປົວ ແລະ ນຳເອົາຜູ້ສຳຜັດໃກ້ຊິດ ມາກວດຫາເຊື້ອ ແລະ ຈຳກັດບໍລິເວນ ໃຫ້ຄົບຖ້ວນໂດຍໄວ;

7. ພະນັກງານ, ທະຫານ, ຕຳຫຼວດ, ຜູ້ປະກອບການ, ກຳມະກອນ ແລະ ປະຊາຊົນ ຕະຫຼອດຮອດຜູ້ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ຢູ່ນະຄອນຫຼວງວຽງຈັນ ຕ້ອງຍົກລະດັບຄວາມມີສະຕິເຄົາລົບ ແລະ ຕື່ນຕົວ ປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ຢ່າງເຂັ້ມງວດ;

ບຸກຄົນ ຫຼື ນິຕິບຸກຄົນໃດ ທີ່ລະເມີດຄຳສັ່ງ ແລະ ມາດຕະການທີ່ລັດຖະບານ, ຄະນະສະເພາະກິດ, ກະຊວງ - ອົງການຂັ້ນສູນກາງ, ນະຄອນຫຼວງວຽງຈັນ ວາງອອກ ແມ່ນຈະຖືກສຶກສາອົບຮົມ, ສັ່ງໂຈະກິດຈະການ, ດຳເນີນຄະດີຕາມລະບຽບກົດໝາຍ ແລະ ຈະຖືກປັບໄໝ ຕາມແຈ້ງການຂອງຄະນະສະເພາະກິດ ກຳນົດອອກໃນແຕ່ລະໄລຍະ;

8. ໃຫ້ທຸກການຈັດຕັ້ງລັດ, ລວມໝູ່ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ຢູ່ນະຄອນຫຼວງວຽງຈັນ ເພີ່ມທະວີການໂຄສະນາເຜີຍແຜ່ວິທີການ ແລະ ມາດຕະການຕ່າງໆ ເພື່ອຍົກລະດັບການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ທີ່ລັດຖະບານ, ຄະນະສະເພາະກິດສູນກາງ ແລະ ນະຄອນຫຼວງວຽງຈັນ ວາງອອກ, ລວມທັງຄວາມອັນຕະລາຍຮ້າຍແຮງຂອງພະຍາດດັ່ງກ່າວ ໃຫ້ແກ່ພະນັກງານ, ທະຫານ, ຕຳຫຼວດ, ຜູ້ປະກອບການ, ກຳມະກອນ ແລະ ປະຊາຊົນ ຕະຫຼອດຮອດຜູ້ທີ່ດຳລົງຊີວິດ ແລະ ເຄື່ອນໄຫວຢູ່ ນະຄອນຫຼວງວຽງຈັນ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງ ດ້ວຍຫຼາຍຮູບແບບ ຫຼາຍຮູບການ ຜ່ານສື່ຕ່າງໆ;

9. ໃຫ້ອົງການປົກຄອງບ້ານ ເປັນເຈົ້າການຈັດຕັ້ງ, ນຳພາ ໜ່ວຍ 10 ຫຼັງຄາເຮືອນພາຍໃນບ້ານຂອງຕົນ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມາດຕະການຕ່າງໆ ຕາມຄຳສັ່ງສະບັບນີ້ ຢ່າງເຂັ້ມງວດເດັດຂາດ;

10. ໃຫ້ກອງບັນຊາການ ປກຊ-ປກສ ສົມທົບກັບອົງການປົກຄອງ ເມືອງ-ບ້ານ ຈັດຕັ້ງກຳລັງລາດຕະເວນຕາມຊາຍແດນ ປ້ອງກັນຄົນລັກລອບ ເຂົ້າ-ອອກ ເມືອງຜິດກົດໝາຍ; ຕັ້ງດ່ານກວດກາ ລະຫວ່າງນະຄອນຫຼວງວຽງຈັນ ກັບ ບັນດາແຂວງ; ລະຫວ່າງເມືອງ ກັບ ເມືອງ; ບ້ານ ກັບ ບ້ານ; ລົງຄວບຄຸມພື້ນທີ່ເຂດແດງ ແລະ ຕິດຕາມ, ປະຕິບັດມາດຕະການຕໍ່ບຸກຄົນ, ນິຕິບຸກຄົນທີ່ລະເມີດຄຳສັ່ງ ແລະ ລະບຽບການທີ່ຄະນະສະເພາະກິດວາງອອກຢ່າງເຂັ້ມງວດ ແລະ ເດັດຂາດ;

11. ໃຫ້ຄະນະສະເພາະກິດ, ກອງບັນຊາການ ປກຊ-ປກສ, ພະແນກການ, ອົງການທຽບເທົ່າພະແນກ ນະຄອນຫຼວງວຽງຈັນ, ອົງການປົກຄອງເມືອງ - ບ້ານ ເພື່ອບັນຊາ, ອຳນວຍຄວບຄຸມ, ອອກລະບຽບການ ແລະ ຄຳແນະນຳລະອຽດຕື່ມ (ຖ້າເຫັນວ່າມີຄວາມຈຳເປັນ ຫຼື ຄຳສັບໃດທີ່ຍັງບໍ່ທັນຈະແຈ້ງ ແລະ ເຂົ້າໃຈຍາກ) ເພື່ອຮັບປະກັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ມີຄວາມເປັນເອກະພາບ, ເຂັ້ມງວດ ແລະ ເດັດຂາດ;

12. ຄຳສັ່ງສະບັບນີ້ ນຳໃຊ້ໄປຈົນກວ່າ ຈະສາມາດຄວບຄຸມການແຜ່ລະບາດພະຍາດ COVID-19 ຢູ່ໃນຊຸມຊົນໄດ້ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ປ່ອນສົ່ງ:

| | |
|---|---|
| - ເລຂາ, ຮອງເລຂາ, ຄະນະປະຈຳພັກ ນວ ສະຫາຍລະ | 01 ສະບັບ; |
| - ຄະນະສະເພາະກິດ ສູນກາງ | 01 ສະບັບ; |
| - ຫ້ອງວ່າການສູນກາງພັກ | 01 ສະບັບ; |
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ; |
| - ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ; |
| - ກະຊວງ - ອົງການ ພາກສ່ວນລະ | 01 ສະບັບ; |
| - ຄະນະສະເພາະກິດ ນວ - ເມືອງ ພາກສ່ວນລະ | 01 ສະບັບ; |
| - ພະແນກການ, ອົງການລັດທຽບເທົ່າ, ເມືອງ ພາກສ່ວນລະ | 01 ສະບັບ; |
| - ເກັບມ້ຽນສຳເນົາ | 01 ສະບັບ; |

ນະຄອນຫຼວງວຽງຈັນ
ເຈົ້າຄອງນະຄອນ

**ອາດສະພັງທອງ ສີພັນດອນ**